ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ກອງປະຊຸມທະວິພາຄີຂັ້ນວິຊາການ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນ ສາຂາ ຄຸນມິ່ງ




ໃນວັນທີ 08 ທັນວາ 2022, ທີ່ທະນາຄານແຫ່ງ ສປປ ລາວ (ທຫລ) ໄດ້ຈັດກອງກອງປະຊຸມທະວິພາຄີຂັ້ນວິຊາການ ລະຫວ່າງ ທະນາຄານແຫ່ງ ສປປ ລາວ ແລະ ທະນາຄານປະຊາຊົນຈີນ ສາຂາ ຄຸນມິ່ງ ຂຶ້ນໃນຮູບແບບທາງໄກ (ອອນລາຍ) ໂດຍການເປັນປະທານຮ່ວມຂອງທ່ານ ນ. ແພງສີ ແພງເມືອງ, ຫົວໜ້າກົມຮ່ວມມືສາກົນ ທະນາ ຄານແຫ່ງ ສປປ ລາວ, ທ່ານ ເວີນ ຈ້ຽງຢົ້ງ (WEN Jiangyong), ຮອງຫົວໜ້າສາຂາ, ທະນາຄານປະຊາຊົນຈີນ ສາຂາ ຄຸນມິ່ງ, ພ້ອມດ້ວຍຄະນະຈາກບັນດາກົມກອງທີ່ກ່ຽວຂ້ອງຂອງທັງ 2 ທະນາຄານກາງເຂົ້າຮ່ວມ.

ຈຸດປະສົງຂອງກອງປະຊຸມໃນຄັ້ງນີ້, ແມ່ນເພື່ອເປັນການປຶກສາຫາລືແລກປ່ຽນວິຊາການກ່ຽວກັບວຽກງານການຊໍາລະເປັນສະກຸນເງິນທ້ອງຖິ່ນ, ວຽກງານການບໍລິການຊໍາລະຂອງ ສປ ຈີນ, ເຕັກໂນໂລຊີທາງດ້ານການເງິນຂອງ ສປ ຈີນ ແລະ ທຸລະກໍາຂອບເຂດເສດຖະກິດພິເສດບໍ່ເຕນ-ບໍ່ຫານ.



ຜົນສໍາເລັດຂອງກອງປະຊຸມດັ່ງກ່າວໄດ້ເປັນຂີດໝາຍອັນສໍາຄັນ ເພື່ອເສີມສ້າງສາຍພົວພັນການຮ່ວມມື ຂອງສອງທະນາຄານກາງໃຫ້ເລິກເຊິ່ງຍິ່ງຂຶ້ນ.

**ໂດຍ: ສົມພິດ ທໍາມະວົງ**

*ຢູ່ເມືອງລາວ ໃຊ້ກີບລາວ*